ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 677 /ທຫລ
ນະຄອນຫຼວງວຽງຈັນ, ວັນທີ 24 ກໍລະກົດ 2023

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ
# ກ່ຽວກັບການນໍາເຂົ້າ-ສົ່ງອອກ ສິນຄ້າ ແລະ ການບໍລິການ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ສະບັບເລກທີ 15/ສພຊ, ລົງວັນທີ 07 ກໍລະກົດ 2022;
- ອີງຕາມ ຄໍາສັ່ງວ່າດ້ວຍການຈັດຕັ້ງປະຕິບັດການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 10/ນຍ, ລົງວັນທີ 14 ກໍລະກົດ 2023;
- ອີງຕາມ ການຄົ້ນຄວ້າຂອງກົມຄຸ້ມຄອງເງິນຕາຕ່າງປະເທດ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກໍານົດຫຼັກການ, ລະບຽບການ ແລະ ມາດຕະການ ໃນການຄຸ້ມຄອງເງິນຕາຕ່າງປະເທດກ່ຽວກັບການນໍາເຂົ້າ-ສົ່ງອອກ ສິນຄ້າ ແລະ ການບໍລິການ ເພື່ອຊຸກຍູ້ທຸລະກໍາການຊໍາລະ ແລະ ຮັບຊໍາລະ ຄ່າສິນຄ້າ ແລະ ການບໍລິການກັບຕ່າງປະເທດ ໃຫ້ຜ່ານລະບົບທະນາຄານ ແນໃສ່ສ້າງຄວາມເຂັ້ມແຂງຖານະຊໍາລະກັບຕ່າງປະເທດ ແລະ ຄັງສໍາຮອງເງິນຕາຕ່າງປະເທດ ປະກອບສ່ວນເຂົ້າໃນການຮັກສາສະຖຽນລະພາບເງິນຕາແຫ່ງຊາດ.

**ມາດຕາ 2 ການຄຸ້ມຄອງເງິນຕາຕ່າງປະເທດກ່ຽວກັບການນຳເຂົ້າ-ສົ່ງອອກ ສິນຄ້າ ແລະ ການບໍລິການ**

ການຄຸ້ມຄອງເງິນຕາຕ່າງປະເທດກ່ຽວກັບການນຳເຂົ້າ-ສົ່ງອອກ ສິນຄ້າ ແລະ ການບໍລິການ ແມ່ນການຈັດຕັ້ງປະຕິບັດບັນດາຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຊຳລະ ແລະ ຮັບຊຳລະ ຄ່າສິນຄ້າ ແລະ ການບໍລິການກັບຕ່າງປະເທດ ຂອງຜູ້ນຳເຂົ້າ-ສົ່ງອອກ ຜ່ານລະບົບທະນາຄານ ໂດຍສອດຄ່ອງກັບຂໍ້ຕົກລົງສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ນຳເຂົ້າ-ສົ່ງອອກ** ໝາຍເຖິງ ວິສາຫະກິດທີ່ດຳເນີນທຸລະກິດຕິດພັນກັບການນຳເຂົ້າ-ສົ່ງອອກ ສິນຄ້າ ແລະ ການບໍລິການ ຊຶ່ງໄດ້ຮັບໃບຢັ້ງຢືນການລົງທະບຽນເປັນຜູ້ນຳເຂົ້າ-ສົ່ງອອກ ສິນຄ້າ ແລະ ການບໍລິການ ຈາກກະຊວງອຸດສາຫະກຳ ແລະ ການຄ້າ;

2. **ສິນຄ້າ** ໝາຍເຖິງ ຜະລິດຕະພັນທີ່ມີມູນຄ່າທາງເສດຖະກິດ ຊຶ່ງຖືກນຳເຂົ້າ ແລະ/ຫຼື ສົ່ງອອກ ເພື່ອຈຸດປະສົງການຜະລິດ, ປຸງແຕ່ງ, ຊົມໃຊ້ ແລະ ຈຳໜ່າຍ ຕາມທີ່ໄດ້ກຳນົດໄວ້ໃນປຶ້ມສາລະບານສິນຄ້າ ແລະ ອັດຕາພາສີລະບົບເອກະພາບ;

3. **ການບໍລິການ** ໝາຍເຖິງ ການບໍລິການດ້ານການ ທ່ອງທ່ຽວ, ສຶກສາ, ສາທາລະນະສຸກ, ປະກັນໄພ, ຂົນສົ່ງ, ໂທລະຄົມມະນາຄົມ, ແຮງງານ ແລະ ບໍລິການອື່ນ;

4. **ທະນາຄານທຸລະກິດ** ໝາຍເຖິງ ທະນາຄານທຸລະກິດລັດ, ທະນາຄານທຸລະກິດລັດຮ່ວມທຶນ, ທະນາຄານເອກະຊົນ, ທະນາຄານທຸລະກິດທີ່ເປັນບໍລິສັດລູກຂອງທະນາຄານຕ່າງປະເທດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ທີ່ໄດ້ຮັບການສ້າງຕັ້ງ ແລະ ອະນຸຍາດດຳເນີນທຸລະກິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

5. **ການໂອນເງິນທາງເອເລັກໂຕຣນິກ (Electronic funds transfer)** ໝາຍເຖິງ ການໂອນເງິນລະຫວ່າງບັນຊີເງິນຝາກຂອງທະນາຄານທຸລະກິດ ດ້ວຍລະບົບເອເລັກໂຕຣນິກ ເປັນຕົ້ນ ວາຍຣ໌ ທຣານສເຟີຣ໌ (Wire Transfer), ລະບົບ Application Programming Interface (API), ລະບົບສະວິບ (SWIFT);

6. **ໜັງສືສິນເຊື່ອ (Letter of Credit ຫຼື L/C)** ໝາຍເຖິງ ໜັງສືຄ້ຳປະກັນການຊຳລະ ທີ່ທະນາຄານທຸລະກິດ ອອກໃຫ້ຜູ້ນຳເຂົ້າ ເພື່ອສັ່ງຊື້ສິນຄ້າຈາກຕ່າງປະເທດ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ຜູ້ນຳເຂົ້າ-ສົ່ງອອກ ແລະ ທະນາຄານທຸລະກິດ.

## ໝວດທີ 2
## ການແຈ້ງລົງທະບຽນ ແລະ ການເປີດບັນຊີເງິນຝາກກ່ຽວກັບການນຳເຂົ້າ-ສົ່ງອອກ

**ມາດຕາ 5 ການແຈ້ງລົງທະບຽນ**

ຜູ້ນຳເຂົ້າ-ສົ່ງອອກ ຕ້ອງແຈ້ງລົງທະບຽນນຳທະນາຄານແຫ່ງ ສປປ ລາວ ພາຍໃນເວລາ ສິບ ວັນລັດຖະການ ນັບແຕ່ວັນທີ່ໄດ້ໃບຢັ້ງຢືນການລົງທະບຽນຜູ້ນຳເຂົ້າ-ສົ່ງອອກ ນຳກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອ

ຂໍໃບຢັ້ງຢືນການແຈ້ງລົງທະບຽນຜູ້ນຳເຂົ້າ-ສົ່ງອອກ ໄປເປີດບັນຊີເງິນຝາກກ່ຽວກັບການນຳເຂົ້າ-ສົ່ງອອກ ນຳທະນາຄານທຸລະກິດ.

ເອກະສານປະກອບຂໍໃບຢັ້ງຢືນການແຈ້ງລົງທະບຽນຜູ້ນຳເຂົ້າ-ສົ່ງອອກ ມີດັ່ງນີ້:

1. ປະກອບຂໍ້ມູນຕາມແບບພິມຂອງທະນາຄານແຫ່ງ ສປປ ລາວ;
2. ສຳເນົາໃບຢັ້ງຢືນການລົງທະບຽນຜູ້ນຳເຂົ້າ-ສົ່ງອອກ;
3. ສຳເນົາໃບອະນຸຍາດລົງທຶນ ແລະ/ຫຼື ໃບທະບຽນວິສາຫະກິດ;
4. ໃບອະນຸຍາດດຳເນີນທຸລະກິດທີ່ກ່ຽວຂ້ອງ (ຖ້າມີ);
5. ເອກະສານອື່ນ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ.

ສຳລັບຜູ້ນຳເຂົ້າ-ສົ່ງອອກ ທີ່ໄດ້ນຳໃຊ້ຫຼາຍບັນຊີເງິນຝາກໃນໄລຍະຜ່ານມາ ຕ້ອງແຈ້ງຂໍ້ມູນກ່ຽວກັບບັນຊີເງິນຝາກທັງໝົດຂອງຕົນທີ່ໄດ້ເປີດນຳທະນາຄານທຸລະກິດຕ່າງໆ ຕາມແບບພິມຂອງທະນາຄານແຫ່ງ ສປປ ລາວ.

### ມາດຕາ 6 ການພິຈາລະນາອອກໃບຢັ້ງຢືນການແຈ້ງລົງທະບຽນຜູ້ນຳເຂົ້າ-ສົ່ງອອກ

ທະນາຄານແຫ່ງ ສປປ ລາວ ຈະພິຈາລະນາອອກໃບຢັ້ງຢືນການແຈ້ງລົງທະບຽນຜູ້ນຳເຂົ້າ-ສົ່ງອອກ ພາຍໃນເວລາ ຫ້າ ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານປະກອບ ຢ່າງຖືກຕ້ອງ ແລະ ຄົບຖ້ວນ.

### ມາດຕາ 7 ການເປີດບັນຊີເງິນຝາກກ່ຽວກັບການນຳເຂົ້າ-ສົ່ງອອກ

ຜູ້ນຳເຂົ້າ-ສົ່ງອອກ ຕ້ອງເປີດບັນຊີເງິນຝາກກ່ຽວກັບການນຳເຂົ້າ-ສົ່ງອອກ ນຳທະນາຄານທຸລະກິດ ພາຍໃນເວລາ ສິບ ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບໃບຢັ້ງຢືນການແຈ້ງລົງທະບຽນຜູ້ນຳເຂົ້າ-ສົ່ງອອກ.

ທະນາຄານທຸລະກິດ ທີ່ມີເງື່ອນໄຂໃຫ້ບໍລິການຊຳລະກ່ຽວກັບການນຳເຂົ້າ-ສົ່ງອອກ ມີໜ້າທີ່ເປີດບັນຊີເງິນຝາກກ່ຽວກັບການນຳເຂົ້າ-ສົ່ງອອກ ໂດຍອີງໃສ່ໃບຢັ້ງຢືນການແຈ້ງລົງທະບຽນຜູ້ນຳເຂົ້າ-ສົ່ງອອກ ຈາກທະນາຄານແຫ່ງ ສປປ ລາວ.

## ໝວດທີ 3
## ການຊຳລະ ແລະ ການຮັບຊຳລະ
## ຄ່າສິນຄ້າ ແລະ ການບໍລິການກັບຕ່າງປະເທດ

### ມາດຕາ 8 ເງື່ອນໄຂຂອງທະນາຄານທຸລະກິດທີ່ໃຫ້ບໍລິການຊຳລະກ່ຽວກັບການນຳເຂົ້າ-ສົ່ງອອກ

ທະນາຄານທຸລະກິດ ທີ່ໃຫ້ບໍລິການຊຳລະກ່ຽວກັບການນຳເຂົ້າ-ສົ່ງອອກ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີລະບຽບການ ແລະ/ຫຼື ຄູ່ມື ໃນການໃຫ້ບໍລິການຊຳລະກ່ຽວກັບການນຳເຂົ້າ-ສົ່ງອອກ;
2. ມີໜ່ວຍງານຮັບຜິດຊອບໃນການຄຸ້ມຄອງການໃຫ້ບໍລິການກ່ຽວກັບການນຳເຂົ້າ-ສົ່ງອອກ;
3. ມີບຸກຄະລາກອນຈຳນວນໜຶ່ງທີ່ເໝາະສົມ ແລະ ໄດ້ຮັບການຝຶກອົບຮົມຈາກທະນາຄານແຫ່ງ ສປປ ລາວ ກ່ຽວກັບການໃຫ້ບໍລິການກ່ຽວກັບການນຳເຂົ້າ-ສົ່ງອອກ;

4. ມີລະບົບໂອນເງິນທາງເອເລັກໂຕຣນິກ ເພື່ອຮອງຮັບການຊໍາລະ ແລະ ຮັບຊໍາລະກັບຕ່າງປະເທດ ທີ່ສອດຄ່ອງກັບລະບຽບການຂອງທະນາຄານແຫ່ງ ສປປ ລາວ;

5. ມີຜະລິດຕະພັນການເງິນ ເພື່ອອໍານວຍຄວາມສະດວກໃຫ້ແກ່ການນໍາເຂົ້າ-ສົ່ງອອກ ສິນຄ້າ ແລະ ການບໍລິການ ເປັນຕົ້ນ ໜັງສືສິນເຊື່ອ, ຜະລິດຕະພັນດ້ານການເງິນທີ່ປ້ອງກັນຄວາມສ່ຽງອັດຕາແລກປ່ຽນ;

6. ມີເງື່ອນໄຂອື່ນ ຕາມການກໍານົດຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 9 ພັນທະຂອງທະນາຄານທຸລະກິດໃນການໃຫ້ບໍລິການຊໍາລະ**

ໃນການໃຫ້ບໍລິການຊໍາລະກ່ຽວກັບການນໍາເຂົ້າ-ສົ່ງອອກ ທະນາຄານທຸລະກິດ ມີພັນທະ ດັ່ງນີ້:

1. ກວດກາຄວາມຖືກຕ້ອງ ແລະ ຄົບຖ້ວນ ຂອງເອກະສານກ່ຽວກັບການນໍາເຂົ້າ-ສົ່ງອອກ;

2. ຕິດຕາມ ກວດກາ ການຊໍາລະ ແລະ ຮັບຊໍາລະ ຄ່າສິນຄ້າ ແລະ ການບໍລິການກັບຕ່າງປະເທດ ຂອງຜູ້ນໍາເຂົ້າ-ສົ່ງອອກ ໃຫ້ຜ່ານລະບົບທະນາຄານ ແລະ ບັນຊີເງິນຝາກກ່ຽວກັບການນໍາເຂົ້າ-ສົ່ງອອກ. ກໍລະນີພົບເຫັນການຊໍາລະ ແລະ ຮັບຊໍາລະທີ່ບໍ່ສອດຄ່ອງ ຕ້ອງຊຸກຍູ້ຜູ້ນໍາເຂົ້າ-ສົ່ງອອກ ໃຫ້ປະຕິບັດຕາມລະບຽບການ ແລະ ລາຍງານທະນາຄານແຫ່ງ ສປປ ລາວ;

3. ປະຕິເສດການໃຫ້ບໍລິການຊໍາລະ ຄ່າສິນຄ້າ ແລະ ການບໍລິການກັບຕ່າງປະເທດ ຜ່ານບັນຊີເງິນຝາກປະເພດອື່ນ ທີ່ບໍ່ແມ່ນບັນຊີເງິນຝາກກ່ຽວກັບການນໍາເຂົ້າ-ສົ່ງອອກ;

4. ເກັບກໍາ, ສັງລວມ ແລະ ລາຍງານ ສະຖິຕິການເປີດບັນຊີເງິນຝາກກ່ຽວກັບການນໍາເຂົ້າ-ສົ່ງອອກ, ການຊໍາລະ, ການຮັບຊໍາລະ, ການແລກປ່ຽນເງິນຕາ ແລະ ການເຄື່ອນໄຫວອື່ນ ໃນບັນຊີເງິນຝາກຂອງຜູ້ນໍາເຂົ້າ-ສົ່ງອອກ ໃຫ້ທະນາຄານແຫ່ງ ສປປ ລາວ ປະຈໍາວັນ, ເດືອນ, ໄຕມາດ, ປີ ຫຼື ຕາມການສະເໜີຂອງທະນາຄານແຫ່ງ ສປປ ລາວ;

5. ປະຕິບັດພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 10 ການຊໍາລະຄ່າສິນຄ້າ ແລະ ການບໍລິການກັບຕ່າງປະເທດ**

ຜູ້ນໍາເຂົ້າ ຕ້ອງນໍາໃຊ້ບັນຊີເງິນຝາກກ່ຽວກັບການນໍາເຂົ້າ-ສົ່ງອອກເທົ່ານັ້ນ ໃນການຊໍາລະຄ່າສິນຄ້າ ແລະ ການບໍລິການກັບຕ່າງປະເທດ ດ້ວຍການໂອນເງິນທາງເອເລັກໂຕຣນິກ ໂດຍມີເອກະສານປະກອບ ດັ່ງນີ້:

1. ໃບສະເໜີຂໍໂອນເງິນຕາມແບບພິມຂອງທະນາຄານທຸລະກິດ;

2. ສໍາເນົາໃບຮຽກເກັບຄ່າສິນຄ້າ ແລະ ການບໍລິການ (Invoice) ຫຼື ເອກະສານແຈ້ງລາຄາກ່ຽວຂ້ອງ;

3. ສໍາເນົາສັນຍາຊື້ ຂາຍ ສິນຄ້າ ແລະ ການບໍລິການ (ຖ້າມີ);

4. ສໍາເນົາໃບແຈ້ງມອບຊໍາລະພັນທະອາກອນ;

5. ສໍາເນົາໃບແຈ້ງພາສີນໍາເຂົ້າເປັນລາຍລະອຽດ. ກໍລະນີຊໍາລະຄ່າສິນຄ້າລ່ວງໜ້າ ແມ່ນໃຫ້ສໍາເນົາໃບແຈ້ງພາສີ ຢ່າງຫຼັງ ເຈັດ ວັນ ຫຼັງຈາກມີການແຈ້ງສິນຄ້ານໍາເຂົ້າດັ່ງກ່າວ;

6. ສໍາເນົາໃບອະນຸຍາດນໍາເຂົ້າສິນຄ້າ (ກໍລະນີເປັນສິນຄ້າ ທີ່ຢູ່ໃນລາຍການຕ້ອງຂໍອະນຸຍາດນໍາຂະແໜງການທີ່ກ່ຽວຂ້ອງ);

7. ສໍາເນົາໃບຢັ້ງຢືນການລົງທະບຽນຜູ້ນໍາເຂົ້າ-ສົ່ງອອກ;

8. ສຳເນົາໃບອະນຸຍາດລົງທຶນ ແລະ/ຫຼື ໃບທະບຽນວິສາຫະກິດ;

9. ສຳເນົາໃບອະນຸຍາດດຳເນີນທຸລະກິດທີ່ກ່ຽວຂ້ອງ (ຖ້າມີ);

10. ເອກະສານອື່ນ ຕາມການກຳນົດຂອງທະນາຄານທຸລະກິດ.

**ມາດຕາ 11 ການຮັບຊຳລະຄ່າສິນຄ້າ ແລະ ການບໍລິການກັບຕ່າງປະເທດ**

ຜູ້ສົ່ງອອກ ຕ້ອງຮັບຊຳລະຄ່າສິນຄ້າ ແລະ ການບໍລິການກັບຕ່າງປະເທດ ເຂົ້າບັນຊີເງິນຝາກກ່ຽວກັບການນຳເຂົ້າ-ສົ່ງອອກ ຜ່ານການໂອນເງິນທາງເອເລັກໂຕຣນິກ ພາຍໃນວັນຊຳລະທີ່ລະບຸໄວ້ໃນສັນຍາຊື້ ຂາຍ ແຕ່ບໍ່ເກີນ ຮ້ອຍແປດສິບ ວັນ ນັບແຕ່ວັນທີ່ສົ່ງອອກຈາກດ່ານພາສີສຳລັບສິນຄ້າ ຫຼື ນັບແຕ່ວັນຊຳລະທີ່ລະບຸໄວ້ໃນສັນຍາສຳລັບການບໍລິການ.

ພາຍຫຼັງໄດ້ຮັບຊຳລະຄ່າສິນຄ້າ ແລະ ການບໍລິການກັບຕ່າງປະເທດ ຜູ້ສົ່ງອອກຕ້ອງສຳເນົາເອກະສານກ່ຽວກັບການຮັບຊຳລະດັ່ງກ່າວ ໃຫ້ທະນາຄານທຸລະກິດ ດັ່ງນີ້:

1. ສັນຍາຊື້ ຂາຍ ຫຼື ເອກະສານຢັ້ງຢືນການຊື້ ຂາຍ ທີ່ກ່ຽວຂ້ອງກັບຕ່າງປະເທດ;
2. ໃບຮຽກເກັບຄ່າສິນຄ້າ ແລະ ບໍລິການ (Invoice);
3. ໃບແຈ້ງພາສີສົ່ງອອກສິນຄ້າ;
4. ສຳເນົາໃບອະນຸຍາດສົ່ງອອກສິນຄ້າ (ກໍລະນີລາຍການສິນຄ້າທີ່ຕ້ອງຂໍອະນຸຍາດນຳຂະແໜງການກ່ຽວຂ້ອງກ່ອນການສົ່ງອອກ);
5. ແຜນລາຍຮັບຂອງຜູ້ສົ່ງອອກ;
6. ເອກະສານອື່ນ ຕາມການກຳນົດຂອງທະນາຄານທຸລະກິດ.

**ມາດຕາ 12 ການຮັກສາລາຍຮັບຈາກການສົ່ງອອກ ໄວ້ຢູ່ຕ່າງປະເທດ**

ຜູ້ສົ່ງອອກ ທີ່ຕ້ອງການຮັກສາລາຍຮັບຈາກການສົ່ງອອກ ໄວ້ຢູ່ຕ່າງປະເທດເພື່ອຊຳລະເງິນກູ້ ຕ້ອງຂໍອະນຸຍາດນຳທະນາຄານແຫ່ງ ສປປ ລາວ ຊຶ່ງຈະພິຈາລະນາບົນພື້ນຖານທີ່ເປັນໂຄງການສຳຄັນລະດັບຊາດ.

ເອກະສານປະກອບການຂໍອະນຸຍາດ ມີດັ່ງນີ້:

1. ສຳເນົາສັນຍາສຳປະທານ;
2. ສຳເນົາໃບອະນຸຍາດລົງທຶນ ແລະ/ຫຼື ໃບທະບຽນວິສາຫະກິດ;
3. ສຳເນົາໃບອະນຸຍາດດຳເນີນທຸລະກິດ (ຖ້າມີ);
4. ສຳເນົາໃບອະນຸຍາດກູ້ຢືມເງິນຢູ່ຕ່າງປະເທດ;
5. ສຳເນົາສັນຍາກູ້ຢືມເງິນຢູ່ຕ່າງປະເທດ;
6. ເອກະສານອື່ນ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ.

ທະນາຄານແຫ່ງ ສປປ ລາວ ຈະພິຈາລະນາອະນຸຍາດ ພາຍໃນເວລາ ສິບ ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານປະກອບຂໍການອະນຸຍາດ ຢ່າງຖືກຕ້ອງ ແລະ ຄົບຖ້ວນ.

## ໝວດທີ 4
## ຂໍ້ຫ້າມ

**ມາດຕາ 13 ຂໍ້ຫ້າມສໍາລັບຜູ້ນໍາເຂົ້າ-ສົ່ງອອກ**

ຫ້າມຜູ້ນໍາເຂົ້າ-ສົ່ງອອກ ມີພຶດຕິກໍາ ດັ່ງນີ້:

1. ບໍ່ແຈ້ງລົງທະບຽນຜູ້ນໍາເຂົ້າ-ສົ່ງອອກ ນໍາທະນາຄານແຫ່ງ ສປປ ລາວ ພາຍໃນກໍານົດເວລາ;

2. ບໍ່ເປີດບັນຊີເງິນຝາກກ່ຽວກັບການນໍາເຂົ້າ-ສົ່ງອອກ ນໍາທະນາຄານທຸລະກິດ ພາຍໃນກໍານົດເວລາ;

3. ນໍາໃຊ້ບັນຊີເງິນຝາກປະເພດອື່ນທີ່ບໍ່ແມ່ນບັນຊີເງິນຝາກກ່ຽວກັບການນໍາເຂົ້າ-ສົ່ງອອກ ເພື່ອຊໍາລະ ແລະ/ຫຼື ຮັບຊໍາລະຄ່າສິນຄ້າ ແລະ ການບໍລິການກັບຕ່າງປະເທດ;

4. ຮັບຊໍາລະຄ່າສິນຄ້າ ແລະ ການບໍລິການກັບຕ່າງປະເທດ ດ້ວຍຮູບແບບອື່ນທີ່ບໍ່ຜ່ານລະບົບໂອນເງິນ ຂອງທະນາຄານທຸລະກິດ;

5. ນໍາເອົາລາຍຮັບຈາກການສົ່ງອອກ ເຂົ້າບັນຊີເງິນຝາກປະເພດອື່ນ ຫຼື ເຂົ້າບັນຊີເງິນຝາກກ່ຽວກັບ ການນໍາເຂົ້າ-ສົ່ງອອກ ບໍ່ຄົບຖ້ວນຕາມ ຈໍານວນ ແລະ ວັນຊໍາລະທີ່ລະບຸໃນສັນຍາຊື້ ຂາຍ ຫຼື ເອກະສານຢັ້ງຢືນ ການຊື້ ຂາຍ ທີ່ກ່ຽວຂ້ອງ;

6. ຮັກສາລາຍຮັບຈາກການສົ່ງອອກໄວ້ຢູ່ຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ;

7. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 14 ຂໍ້ຫ້າມສໍາລັບທະນາຄານທຸລະກິດ**

ຫ້າມທະນາຄານທຸລະກິດ ມີພຶດຕິກໍາ ດັ່ງນີ້:

1. ໃຫ້ບໍລິການຊໍາລະ ຄ່າສິນຄ້າ ແລະ ການບໍລິການກັບຕ່າງປະເທດ ຜ່ານບັນຊີເງິນຝາກປະເພດອື່ນ ທີ່ບໍ່ແມ່ນບັນຊີເງິນຝາກກ່ຽວກັບການນໍາເຂົ້າ-ສົ່ງອອກ;

2. ເປີດບັນຊີເງິນຝາກໃຫ້ຜູ້ນໍາເຂົ້າ-ສົ່ງອອກ ບໍ່ສອດຄ່ອງຕາມລະບຽບການ;

3. ບໍ່ເກັບກໍາ, ສັງລວມ ແລະ ລາຍງານ ສະຖິຕິການເປີດບັນຊີເງິນຝາກກ່ຽວກັບການນໍາເຂົ້າ-ສົ່ງ ອອກ, ການຊໍາລະ, ການຮັບຊໍາລະ, ການແລກປ່ຽນເງິນຕາ ແລະ ການເຄື່ອນໄຫວອື່ນ ໃນບັນຊີເງິນຝາກຂອງ ຜູ້ນໍາເຂົ້າ-ສົ່ງອອກ ໃຫ້ທະນາຄານແຫ່ງ ສປປ ລາວ;

4. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ການຄຸ້ມຄອງວຽກງານເງິນຕາຕ່າງປະເທດ
## ກ່ຽວກັບການນຳເຂົ້າ-ສົ່ງອອກ

**ມາດຕາ 15 ການຄຸ້ມຄອງວຽກງານເງິນຕາຕ່າງປະເທດກ່ຽວກັບການນຳເຂົ້າ-ສົ່ງອອກ**

ກົມຄຸ້ມຄອງເງິນຕາຕ່າງປະເທດ ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການ ໃນການຄຸ້ມຄອງວຽກງານເງິນຕາຕ່າງປະເທດກ່ຽວກັບການນຳເຂົ້າ-ສົ່ງອອກ ໂດຍປະສານສົມທົບກັບກົມນະໂຍບາຍເງິນຕາ, ກົມຄຸ້ມຄອງທະນາຄານທຸລະກິດ, ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 16 ສິດ ແລະ ໜ້າທີ່ ຂອງກົມຄຸ້ມຄອງເງິນຕາຕ່າງປະເທດ**

ໃນການຄຸ້ມຄອງວຽກງານເງິນຕາຕ່າງປະເທດກ່ຽວກັບການນຳເຂົ້າ-ສົ່ງອອກ ກົມຄຸ້ມຄອງເງິນຕາຕ່າງປະເທດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້ານະໂຍບາຍ ແລະ ນິຕິກຳ ກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດກ່ຽວກັບການນຳເຂົ້າ-ສົ່ງອອກ ເພື່ອສະເໜີຂັ້ນເທິງພິຈາລະນາ;

2. ຕິດຕາມ ກວດກາ ຜູ້ນຳເຂົ້າ-ສົ່ງອອກ ກ່ຽວກັບການເປີດບັນຊີເງິນຝາກ, ການນຳລາຍຮັບຈາກການສົ່ງອອກ ເຂົ້າໃນບັນຊີເງິນຝາກກ່ຽວກັບການນຳເຂົ້າ-ສົ່ງອອກ, ແຜນລາຍຮັບ ແລະ ການເຄື່ອນໄຫວບັນຊີເງິນຝາກດັ່ງກ່າວ;

3. ຄົ້ນຄວ້າລະບົບຕິດຕາມກະແສເງິນຈາກການນຳເຂົ້າ-ສົ່ງອອກ ໃຫ້ທັນສະໄໝ;

4. ແລກປ່ຽນຂໍ້ມູນ ແລະ ປະສານສົມທົບກັບກົມນະໂຍບາຍເງິນຕາ, ກົມຄຸ້ມຄອງທະນາຄານທຸລະກິດ, ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການສ້າງແຜນ ແລະ ປະຕິບັດແຜນລົງກວດທະນາຄານທຸລະກິດ ແລະ ຈັດຕັ້ງປະຕິບັດໜ້າທີ່ອື່ນ ຂອງຕົນ;

5. ນຳໃຊ້ມາດຕະການຕໍ່ຜູ້ທີ່ລະເມີດຂໍ້ຕົກລົງສະບັບນີ້;

6. ສະຫຼຸບ ແລະ ລາຍງານ ການຄຸ້ມຄອງວຽກງານເງິນຕາຕ່າງປະເທດກ່ຽວກັບການນຳເຂົ້າ-ສົ່ງອອກສິນຄ້າ ແລະ ການບໍລິການ ໃຫ້ຂັ້ນເທິງຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 17 ສິດ ແລະ ໜ້າທີ່ ຂອງກົມນະໂຍບາຍເງິນຕາ**

ໃນການຄຸ້ມຄອງວຽກງານເງິນຕາຕ່າງປະເທດກ່ຽວກັບການນຳເຂົ້າ-ສົ່ງອອກ ກົມນະໂຍບາຍເງິນຕາ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງເຄື່ອງມື ນະໂຍບາຍອັດຕາແລກປ່ຽນ ເພື່ອຊຸກຍູ້ ແລະ ສະໜັບສະໜູນວຽກງານຄຸ້ມຄອງວຽກງານເງິນຕາຕ່າງປະເທດກ່ຽວກັບການນຳເຂົ້າ-ສົ່ງອອກ;

2. ປະສານ ແລະ ແລກປ່ຽນຂໍ້ມູນກັບກົມຄຸ້ມຄອງເງິນຕາຕ່າງປະເທດ ເພື່ອປະກອບເຂົ້າໃນການຄຸ້ມຄອງອັດຕາແລກປ່ຽນ ແລະ ໃຊ້ເຂົ້າໃນການສ້າງ ແລະ ຄາດຄະເນ ສະຖິຕິດຸນຊຳລະກັບຕ່າງປະເທດ;

3. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 18 ສິດ ແລະ ໜ້າທີ່ຂອງກົມຄຸ້ມຄອງທະນາຄານທຸລະກິດ**

ໃນການຄຸ້ມຄອງວຽກງານເງິນຕາຕ່າງປະເທດກ່ຽວກັບການນຳເຂົ້າ-ສົ່ງອອກສິນຄ້າ ແລະ ບໍລິການ ກົມຄຸ້ມຄອງທະນາຄານທຸລະກິດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຊຸກຍູ້ທະນາຄານທຸລະກິດ ປະຕິບັດບົດບາດ ແລະ ໜ້າທີ່ ຂອງຕົນ ຕາມທີ່ໄດ້ກຳນົດໃນຂໍ້ຕົກລົງສະບັບນີ້;

2. ໃຫ້ການຮ່ວມມືກັບກົມຄຸ້ມຄອງເງິນຕາຕ່າງປະເທດ ໃນການສ້າງແຜນ ແລະ ປະຕິບັດແຜນລົງກວດກາທະນາຄານທຸລະກິດກ່ຽວກັບການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້;

3. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 19 ສິດ ແລະ ໜ້າທີ່ ຂອງສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ**

ໃນການຄຸ້ມຄອງວຽກງານເງິນຕາຕ່າງປະເທດກ່ຽວກັບການນຳເຂົ້າ-ສົ່ງອອກ ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຕິດຕາມ ແລະ ຊຸກຍູ້ ການເປີດບັນຊີເງິນຝາກກ່ຽວກັບການນຳເຂົ້າ-ສົ່ງອອກ ຂອງຜູ້ນຳເຂົ້າ-ສົ່ງອອກ;

2. ຕິດຕາມການລາຍງານທຸລະກຳນຳເຂົ້າ-ສົ່ງອອກ ຂອງຜູ້ນຳເຂົ້າ-ສົ່ງອອກ ຜ່ານລະບົບເອເລັກໂຕຣນິກ ຂອງທະນາຄານແຫ່ງ ສປປ ລາວ ພາຍຫຼັງດຳເນີນທຸລະກຳດັ່ງກ່າວ;

3. ຕິດຕາມການເຄື່ອນໄຫວບັນຊີເງິນຝາກກ່ຽວກັບການນຳເຂົ້າ-ສົ່ງອອກ ຜ່ານການລາຍງານຂອງທະນາຄານທຸລະກິດ;

4. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້;

5. ນຳໃຊ້ມາດຕະການຕໍ່ຜູ້ທີ່ລະເມີດຂໍ້ຕົກລົງສະບັບນີ້;

6. ສະຫຼຸບ ແລະ ລາຍງານ ວຽກງານເງິນຕາຕ່າງປະເທດກ່ຽວກັບການນຳເຂົ້າ-ສົ່ງອອກ ໃຫ້ກົມຄຸ້ມຄອງເງິນຕາຕ່າງປະເທດ ໃນແຕ່ລະໄລຍະ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ.

## ໝວດທີ 6
## ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 20 ມາດຕະການສຶກສາອົບຮົມ**

ຜູ້ນຳເຂົ້າ-ສົ່ງອອກ ແລະ ທະນາຄານທຸລະກິດ ທີ່ລະເມີດຂໍ້ຕົກລົງສະບັບນີ້ ມີລັກສະນະເບົາ ແລະ ເປັນຄັ້ງທຳອິດ ຈະຖືກສຶກສາອົບຮົມ, ກ່າວເຕືອນ ພ້ອມທັງບັນທຶກເປັນລາຍລັກອັກສອນ.

**ມາດຕາ 21 ມາດຕະການປັບໃໝ**

ຜູ້ນຳເຂົ້າ-ສົ່ງອອກ ແລະ ທະນາຄານທຸລະກິດ ທີ່ລະເມີດຂໍ້ຕົກລົງສະບັບນີ້ ແລະ ຖືກປະຕິບັດມາດຕະການສຶກສາອົບຮົມ ແຕ່ຍັງສືບຕໍ່ກະທຳຜິດຊ້ຳ ຈະຖືກປັບໃໝ ຕາມແຕ່ລະກໍລະນີ ດັ່ງນີ້:

1. ສຳລັບຜູ້ນຳເຂົ້າ-ສົ່ງອອກ

1) ປັບໃໝ 10.000.000 (ສິບລ້ານ) ກີບ ສຳລັບການເຄື່ອນໄຫວ ທີ່ເປັນການລະເມີດມາດຕາ 13 ຂໍ້ 1, 2 ແລະ 3 ຂອງຂໍ້ຕົກລົງລະບັບນີ້;

2) ປັບໃໝ 10% (ສິບສ່ວນຮ້ອຍ) ຂອງມູນຄ່າທີ່ລະເມີດ ສຳລັບການເຄື່ອນໄຫວທີ່ເປັນການລະເມີດມາດຕາ 13 ຂໍ້ 4 ແລະ 6 ຂອງຂໍ້ຕົກລົງລະບັບນີ້;

2. ສຳລັບທະນາຄານທຸລະກິດ: ປັບໃໝ 5.000.000 (ຫ້າລ້ານ) ກີບ ຕໍ່ຄັ້ງ ສຳລັບການເຄື່ອນໄຫວທີ່ເປັນການລະເມີດມາດຕາ 14 ຂອງຂໍ້ຕົກລົງສະບັບນີ້. ສຳລັບການລະເມີດຊ້ຳໃນແຕ່ລະກໍລະນີ ຈະຖືກປັບໃໝສອງເທົ່າ ຂອງມູນຄ່າປັບໃໝໃນຄັ້ງຫຼ້າສຸດ.

**ມາດຕາ 22 ມາດຕະການທາງບໍລິຫານອື່ນ**

ຜູ້ນຳເຂົ້າ-ສົ່ງອອກ ທີ່ຖືກປະຕິບັດ ມາດຕະການສຶກສາອົບຮົມ ແລະ ມາດຕະການປັບໃໝ ຕາມມາດຕາ 20 ແລະ 21 ຂອງຂໍ້ຕົກລົງສະບັບນີ້ ແຕ່ຍັງມີການລະເມີດຊ້ຳໃນແຕ່ລະກໍລະນີ ຈະຖືກປະຕິບັດມາດຕະການທາງບໍລິຫານອື່ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 56 ຂອງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 23 ການຈັດຕັ້ງປະຕິບັດ**

ກົມຄຸ້ມຄອງເງິນຕາຕ່າງປະເທດ ເປັນເຈົ້າການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ກົມນະໂຍບາຍເງິນຕາ, ກົມຄຸ້ມຄອງທະນາຄານທຸລະກິດ, ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ມີໜ້າທີ່ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມພາລະບົດບາດຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 24 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ບຸນເຫຼືອ ສິນໄຊວໍຣະວົງ